ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ກະຊວງຍຸຕິທຳ
ກົມໂຄສະນາເຜີຍແຜ່ກົດໝາຍ

ເລກທີ 91 /ກຍ.ກຄຜ
ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2018

# ບົດລາຍງານ

**ຮຽນ:** ທ່ານລັດຖະມົນຕີກະຊວງຍຸຕິທຳ

**ເລື່ອງ:** ການລົງພົບປະ ແລະ ປຶກສາຫາລື ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ 3 ແຂວງພາກເໜືອ

## I. ສະພາບລວມ

ໃນວັນທີ 4-11 ມີນາ 2018 ຄະນະພັກ-ຄະນະນຳກະຊວງຍຸຕິທຳ ນຳໂດຍ ທ່ານ ປອ. ເສີມສຸກ ສົມພະວົງ ຮອງເລຂາຄະນະບໍລິຫານງານພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທຳ ພ້ອມດ້ວຍ ທ່ານ ພູທອນ ແກ້ວດວງມະນີ ຄະນະພັກກະຊວງ, ຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ແລະ ວິຊາການທີ່ຮັບຜິດຊອບວຽກງານຈົດໝາຍເຫດທາງລັດຖະການ ໄດ້ລົງຕິດຕາມ, ຊຸກຍູ້ວຽກງານຈົດໝາຍເຫດທາງລັດຖະການ ກັບຄະນະພັກ-ຄະນະນຳ 3 ແຂວງພາກເໜືອ ຄື: ແຂວງຫຼວງພະບາງ, ອຸດົມໄຊ ແລະ ແຂວງບໍ່ແກ້ວ ຜູ້ເຂົ້າຮ່ວມປະກອບມີ ຜູ້ປະສານງານຈາກຫ້ອງວ່າການປົກຄອງແຂວງ, ພະແນກຍຸຕິທຳແຂວງ ແລະ ຜູ້ຕາງໜ້າໂຄງ ການ LUNA II , ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 47 ທ່ານ, ຍິງ 11 ທ່ານ.

## II. ສະພາບການເຄື່ອນໄຫວຢູ່ທ້ອງຖິ່ນ

### 1. ວັນທີ 5 ມີນາ 2018, ເຄື່ອນໄຫວວຽກງານຢູ່ ແຂວງຫຼວງພະບາງ

- ໃນຕອນບ່າຍຂອງວັນທີ 5 ມີນາ 2018 ທ່ານ ປອ. ເສີມສຸກ ສົມພະວົງ ຮອງເລຂາຄະນະບໍລິຫານງານພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທຳ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະ ແລະ ປຶກສາຫາລື ນຳ ທ່ານ ວົງສະຫວັນ ເທບສະຫວັນ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງຫຼວງພະບາງ ພ້ອມດ້ວຍຄະນະ ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ, ໃນທີ່ປະຊຸມ ທ່ານຮອງລັດຖະມົນຕີກະຊວງຍຸຕິທຳໄດ້ກ່າວເຖິງຈຸດປະສົງ ແລະ ສະເໜີກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການໂດຍຫຍໍ້ ຊຶ່ງທ່ານໄດ້ເວົ້າເຖິງຄວາມໝາຍ ຄວາມສຳຄັນຂອງວຽກງານດັ່ງກ່າວ ຢູ່ໃນກົດໝາຍວ່າດ້ວຍ ການສ້າງນິຕິກຳ ກໍໄດ້ກຳນົດຢ່າງລະອຽດ ແລະ ຈະແຈ້ງແລ້ວວ່າ ບັນດານິຕິກຳທີ່ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ຕ້ອງໄດ້ເອົາມາລົງຈົດໝາຍເຫດທາງລັດຖະການ ເພື່ອປະກາດຜົນສັກສິດ ທັງເປັນການໂຄສະນາເຜີຍແຜ່ບັນດານິຕິກຳໃຫ້ບຸກຄົນທົ່ວໄປໄດ້ຮັບຮູ້ ແລະ ເປັນການເຊື່ອມໂຍງກັບພາກພື້ນ ແລະ ສາກົນອີກດ້ວຍ. ຍ້ອນແນວນັ້ນລັດຖະບານຈຶ່ງໄດ້ຖືວຽກງານດັ່ງກ່າວເປັນສຳຄັນ. ທ່ານຍັງໄດ້ເນັ້ນຕື່ມອີກວ່າ ແຂວງຫຼວງພະບາງເປັນແຂວງໜຶ່ງທີ່ເປັນຈຸດສຸມ ແລະ ເປັນທາງຜ່ານຢູ່ທາງພາກເໜືອ ຍັງເປັນເຂດທ່ອງທ່ຽວ, ສະນັ້ນ, ຈຶ່ງຕ້ອງມີນິຕິກຳເປັນຈຳນວນຫຼາຍ ເພື່ອຮອງຮັບໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ, ຫຼັງຈາກນັ້ນ, ທ່ານກໍໄດ້ຍົກໃຫ້ເຫັນເຖິງແຂວງທີ່ປະຕິບັດໄດ້ດີ ກໍຄືແຂວງບໍ່ແກ້ວ ແລະ ແຂວງອັດຕະປື, ດັ່ງນັ້ນ

, ການລົງມາພົບປະໃນຄັ້ງນີ້ ກໍ່ເພື່ອແລກປ່ຽນ, ປຶກສາຫາລື, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ກັບການນໍາຂອງແຂວງ ແລະ ຜູ້ປະສານງານຂອງແຂວງ ເພື່ອພ້ອມກັນແກ້ໄຂຈຸດບົກພ່ອງ ແລະ ກ້າວໄປເຖິງບັນລຸຜົນສໍາເລັດເຂົ້າໃນວຽກງານ.

- ທ່ານ ວົງສະຫວັນ ເທບພະຈັນ ຄະນະປະຈໍາພັກແຂວງ ຮອງເຈົ້າແຂວງໆຫຼວງພະບາງ ໄດ້ກ່າວວ່າ ກອງປະຊຸມໃນຄັ້ງນີ້ແມ່ນມີຄວາມສໍາຄັນຫຼາຍ ເນື່ອງຈາກວ່າວຽກງານດັ່ງກ່າວເປັນວຽກງານໃໝ່ສໍາລັບພວກຂ້າພະເຈົ້າ ແຕ່ກໍໄດ້ຈັດຕັ້ງປະຕິບັດມາດົນນານແລ້ວ, ຂ້າພະເຈົ້າມີຄວາມຮູ້ສຶກດີໃຈທີ່ທາງຄະນະນໍາກະຊວງຍຸຕິທໍາໄດ້ເອົາໃຈ ໃສ່ລົງມາຕິດຕາມ ແລະ ຊຸກຍູ້ ວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ, ສ່ວນນິຕິກໍາໄດ້ອາງອອກຫຼາຍພໍສົມຄວນ ເປັນຕົ້ນ ຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາຂອງທ່ານເຈົ້າແຂວງ ແຕ່ບາງນິຕິກໍາກໍໄດ້ຖືກຮັບຮອງ ແລະ ບາງນິຕິກໍາກໍຍັງຢູ່ໃນຂັ້ນຕອນພິຈາລະນາ ເຖິງຢ່າງໃດກໍຕາມການຈັດຕັ້ງປະຕິບັດວຽກງານແມ່ນຍັງບໍ່ທັນໄດ້ດີເທົ່າທີ່ຄວນ , ຍັງບໍ່ທັນໄດ້ເຄື່ອນໄຫວຢ່າງຕັ້ງໜ້າ ແລະ ການໂຄສະນາເຜີຍແຜ່ໃຫ້ປະຊາຊົນຮັບຮູ້ຍັງບໍ່ທັນກວ້າງຂວາງ. ທ່ານຍັງໄດ້ກ່າວຕື່ມອີກວ່າ ແຂວງຫຼວງພະບາງເປັນແຂວງຈຸດສຸມທາງດ້ານການທ່ອງທ່ຽວ ແລະ ເຮັດໃຫ້ມີຄວາມດຶງດູດນັກລົງທຶນຢາກເຂົ້າມາລົງທຶນເປັນຈໍານວນຫຼາຍ ດັ່ງນັ້ນ, ຄວນມີນິຕິກໍາຈໍານວນຫຼາຍສະບັບ ເພື່ອມາຮັບຮອງແລະ ທັນເຂົ້າສູ່ລະບຽບຫຼັກການ.

- ທ່ານ ພູທອນ ແກ້ວດວງມະນີ ຄະນະພັກກະຊວງ, ຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ໄດ້ນໍາສະເໜີກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ,ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ທິດທາງແຜນການໃນຕໍ່ໜ້າ, ຊຶ່ງທ່ານກໍໄດ້ມີການບັນຍາຍແຕ່ລະບັນຫາຢ່າງລະອຽດ, ຈາກນັ້ນທ່ານກໍໄດ້ສະເໜີໃຫ້ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງເປັນຜູ້ປະສານງານນັ້ນຮັບຮູ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນການເກັບໂຮມບັນດານິຕິກໍາທີ່ຢູ່ໃນຄວາມຮັບຜິດຊອບຂອງພາກສ່ວນຕົນນັ້ນມາພິມລົງໃນຈົດໝາຍເຫດທາງລັດຖະການ ເຮັດໃຫ້ບັນດານິຕິກໍາເຫຼົ່ານັ້ນມີຜົນສັກສິດຕາມກົດໝາຍ. ຫຼັງຈາກນັ້ນກໍໄດ້ສະເໜີກ່ຽວກັບຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດທີ່ຜ່ານມາ ເປັນຕົ້ນ ຂອດປະສານງານ ລະຫວ່າງ ຜູ້ຮັບຜິດຊອບຂອງກະຊວງຍຸຕິທໍາກັບຜູ້ປະສານງານຂັ້ນແຂວງ ແລະ ການສົ່ງນິຕິກໍາຂອງແຂວງ ມາລົງໃນຈົດໝາຍເຫດທາງລັດຖະການ, ທ່ານຍັງໄດ້ເນັ້ນຕື່ມອີກວ່າ ຖ້າຜູ້ປະສານງານແຂວງໃດຫາກໄດ້ຮັບການຍົກຍ້າຍໄປຮັບໜ້າທີ່ໃໝ່ ຢາກໃຫ້ຄະນະພັກ-ຄະນະນໍາຂອງແຂວງມີການແຕ່ງຕັ້ງໃໝ່ ແລ້ວແຈ້ງໄປຫາຜູ້ຮັບຜິດຊອບຂອງກະຊວງຍຸຕິທໍາ ເພື່ອຮັບຊາບ.

- ທ່ານ ສຸລິວັນ ແສງດາລາວົງ ຫົວໜ້າພະແນກຈົດໝາຍເຫດທາງລັດຖະການ ແລະ ເວັບໄຊ ໄດ້ນໍາສະເໜີກ່ຽວກັບຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງຍຸຕິທໍາ ວ່າດ້ວຍການຄຸ້ມຄອງຈົດໝາຍເຫດທາງລັດຖະການໂດຍຫຍໍ້ ຊຶ່ງທ່ານໄດ້ນໍາສະເໜີບາງມາດຕາທີ່ໄດ້ສ້າງ ແລະ ປັບປຸງໃໝ່ ເປັນຕົ້ນ ໄດ້ເນັ້ນກ່ຽວກັບ ປະເພດນິຕິກໍາຂອງແຂວງທີ່ຈະເອົາມາລົງຈົດໝາຍເຫດທາງລັດຖະການ, ການແຕ່ງຕັ້ງຜູ້ປະສານງານຂອງແຂວງ, ສິດ ແລະ ໜ້າທີ່ຂອງຜູ້ປະສານງານມີຄືແນວໃດ. ຈາກນັ້ນກໍໄດ້ສະເໜີເຖິງຜູ້ປະສານງານ ຄວນມີການປະສານສົມທົບຊຶ່ງກັນ ແລະ ກັນ ເພື່ອເຮັດໃຫ້ວຽກງານມີຄວາມຕໍ່ເນື່ອງ ແລະ ເຮັດໃຫ້ນິຕິກໍາຂອງແຂວງຖືກພິມລົງຈົດໝາຍເຫດທາງລັດຖະການເປັນຈໍານວນຫຼາຍ.

## 2. <u>ວັນທີ 7 ມີນາ 2018, ເຄື່ອນໄຫວວຽກງານຢູ່ ແຂວງອຸດົມໄຊ</u>

- ໃນຕອນບ່າຍຂອງວັນທີ 7 ມີນາ 2018 ທ່ານ ປອ. ເສີມສຸກ ສິມພະວົງ ຮອງເລຂາຄະນະບໍລິຫານງານພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທໍາ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະ ແລະ ປຶກສາຫາລື ນໍາ ທ່ານ ພົມມະສຸກ ມອນຈັນດີ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ ທັງເປັນຫົວໜ້າຜູ້ປະສານງານ ພ້ອມດ້ວຍຄະນະ ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ, ໃນທີ່ປະຊຸມ ທ່ານ ຮອງລັດຖະມົນຕີກະຊວງຍຸຕິທໍາ ໄດ້ກ່າວຈຸດປະສົງ ໃນການລົງມາພົບປະ ແລະ ເຄື່ອນໄຫວວຽກງານ ແມ່ນເພື່ອມາປຶກສາຫາລື, ແລກປ່ຽນບົດຮຽນ ແລະ ຊຸກຍູ້ ໃນການແກ້ໄຂຂໍ້

ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງຕ່າງໆ. ຊຶ່ງທ່ານໄດ້ເວົ້າເຖິງວຽກງານຈົດໝາຍເຫດທາງລັດຖະການເປັນວຽກງານໜຶ່ງທີ່ມີຄວາມສຳຄັນ, ໂດຍອີງຕາມກົດໝາຍວ່າດ້ວຍ ການສ້າງນິຕິກຳ ນິຕິກຳຂັ້ນແຂວງທີ່ຕ້ອງສົ່ງມາພິມລົງໃນຈົດໝາຍເຫດທາງລັດຖະການ ປະກອບມີນິຕິກຳ 3 ປະເພດ ຄື: ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳຂອງທ່ານເຈົ້າແຂວງ. ແຕ່ສັງເກດເຫັນວ່ານິຕິກຳຂອງແຂວງອຸດົມໄຊ ແມ່ນຍັງມີຈຳນວນໜ້ອຍຢູ່, ສະນັ້ນ, ຍາກຂໍສະເໜີນຳຜູ້ປະສານງານຄວນເພີ່ມທະວີຕື່ມ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສັງລວມນິຕິກຳຂອງແຂວງມາລົງໃນຈົດໝາຍເຫດທາງລັດຖະການໃຫ້ເພີ່ມຂຶ້ນກວ່າເກົ່າ ແລະ ມີການປະສານສົມທົບກັບຜູ້ຮັບຜິດຊອບຂອງກະຊວງຍຸຕິທຳຢ່າງເປັນປົກກະຕິ.

- ທ່ານ ພູທອນ ແກ້ວດວງມະນີ ຄະນະພັກກະຊວງ, ຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ໄດ້ນຳສະເໜີກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ ແລະ ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ນອກນັ້ນ, ທ່ານຍັງໄດ້ອະທິບາຍເຖິງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ປະສານງານ, ສະຕິຄວາມຮັບຜິດຊອບໃນການສົ່ງນິຕິກຳມາລົງໃນເວັບໄຊຈົດໝາຍເຫດທາງລັດຖະການ ຊຶ່ງຫ້ອງວ່າການປົກຄອງແຂວງເປັນຈຸດໃຈກາງໃນການເຂົ້າ-ອອກຂອງນິຕິກຳ.

- ທ່ານ ພິມມະສຸກ ມອນຈັນດີ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ ທັງເປັນຫົວໜ້າຜູ້ປະສານງານ ໄດ້ລາຍງານສະພາບລວມຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ທ່ານໄດ້ກ່າວວ່າ ແຂວງອຸດົມໄຊ ເປັນແຂວງໜຶ່ງທີ່ຕັ້ງໜ້າໃນການພັດທະນາລະບົບຖານຂໍ້ມູນຂ່າວສານ ຕາມທິດຊີ້ນຳຂອງທ່ານເຈົ້າແຂວງ, ທາງແຂວງກໍ່ໄດ້ເອົານິຕິກຳຂອງແຂວງລົງໃນເວັບໄຊຂອງແຂວງໄດ້ປະມານ 2,000 ກວ່າສະບັບແລ້ວ. ໄລຍະຜ່ານມາແມ່ນໄດ້ເຂົ້າຮ່ວມກອງປະຊຸມວຽກງານຈົດໝາຍເຫດທາງລັດຖະການ ຢູ່ແຂວງຫຼວງນ້ຳທາ ແລະ ແຂວງຫຼວງພະບາງ ພ້ອມດຽວກັນນັ້ນກໍໄດ້ມີຂໍ້ຕົກລົງຂອງທ່ານເຈົ້າແຂວງ ໃນການແຕ່ງຕັ້ງຄະນະຜູ້ປະສານງານຈົດໝາຍເຫດທາງລັດຖະການການຂັ້ນແຂວງ ຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 40/ນຍ, ລົງວັນທີ 11 ສິງຫາ 2015, ຊຶ່ງປັດຈຸບັນນິຕິກຳຂອງແຂວງຈຳນວນ 7 ສະບັບ ກຳລັງຢູ່ໃນຂັ້ນຕອນຜ່ານ ສະພາປະຊາຊົນແຂວງ ຖ້າວ່າມີການຮັບຮອງແລ້ວຈະມີການໃຈ້ແຍກເບິ່ງນິຕິກຳທີ່ເປັນທົ່ວໄປ ຈຶ່ງຈະສົ່ງມາໃຫ້ທາງກະຊວງຍຸຕິທຳ, ຫຼັງຈາກນັ້ນ, ທ່ານກໍໄດ້ລາຍງານເຖິງ ຂໍ້ສະດວກ, ບັນຫາ, ຂໍ້ຄົງຄ້າງ, ວິທີແກ້ໄຂ ແລະ ທິດທາງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

- ທ່ານ ສຸລິວັນ ແສງດາລາວົງ ຫົວໜ້າພະແນກຈົດໝາຍເຫດທາງລັດຖະການ ແລະ ເວັບໄຊ ໄດ້ຜ່ານຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການຄຸ້ມຄອງຈົດໝາຍເຫດທາງລັດຖະການ ຊຶ່ງທ່ານໄດ້ນຳສະເໜີບາງມາດຕາທີ່ໄດ້ສ້າງ ແລະ ປັບປຸງໃໝ່ ເປັນຕົ້ນ ໄດ້ເນັ້ນກ່ຽວກັບ ປະເພດນິຕິກຳຂອງແຂວງທີ່ຈະເອົາມາລົງຈົດໝາຍເຫດທາງລັດຖະການ, ການແຕ່ງຕັ້ງຜູ້ປະສານງານຂອງແຂວງ, ສິດ ແລະ ໜ້າທີ່ຂອງຜູ້ປະສານງານມີຄືແນວໃດ. ຈາກນັ້ນກໍໄດ້ສະເໜີເຖິງຜູ້ປະສານງານ ຄວນມີການປະສານສົມທົບຊຶ່ງກັນ ແລະ ກັນ ເພື່ອເຮັດໃຫ້ວຽກງານມີຄວາມຕໍ່ເນື່ອງ ຊຶ່ງໄລຍະຜ່ານມາແມ່ນພວກເຮົາໄດ້ຕັ້ງເປັນກຸ່ມວອດແອັບຂອງຜູ້ປະສານງານແຕ່ລະພາກ ເພື່ອແລກປ່ຽນບົດຮຽນ ແລະ ສອບຖາມນິຕິກຳທີ່ຈະສົ່ງມາລົງຈົດໝາຍເຫດທາງລັດຖະການ ເຮັດໃຫ້ວຽກງານມີປະສິດທິຜົນຂຶ້ນກວ່າເກົ່າ.

- ໃນຕອນທ້າຍຂອງກອງປະຊຸມ ທ່ານ ຮອງລັດຖະມົນຕີກະຊວງຍຸຕິທຳ ພ້ອມດ້ວຍຄະນະ ແລະ ຜູ້ປະສານງານຂອງແຂວງ ກໍໄດ້ເຂົ້າພົບ ທ່ານ ເພັດສາຄອນ ຫຼວງອາໄພ ກຳມະການສູນການພັກ ເຈົ້າແຂວງ ແຂວງອຸດົມໄຊ.

### 3. <u>ວັນທີ 9 ມີນາ 2018, ເຄື່ອນໄຫວວຽກງານຢູ່ ແຂວງບໍ່ແກ້ວ</u>

ໃນຕອນເຊົ້າຂອງວັນທີ 9 ມີນາ 2018 ທ່ານ ປອ. ເສີມສຸກ ສິມພະວົງ ຮອງເລຂາຄະນະບໍລິຫານງານພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທຳ ພ້ອມດ້ວຍຄະນະ ໄດ້ເຂົ້າພົບ ທ່ານ ຈອນສີ ລັດຕະນະປັນ ຄະນະປະຈຳ

ພັກແຂວງ, ຮອງເຈົ້າແຂວງບໍ່ແກ້ວ. ທ່ານຮອງລັດຖະມົນຕີກະຊວງຍຸຕິທຳໄດ້ກ່າວຈຸດປະສົງ, ສະຫຼຸບຕີລາຄາ ແລະ ສະພາບການຈັດຕັ້ງປະຕິບັດວຽກຈົດໝາຍເຫດທາງລັດຖະການ ເຖິງຜົນງານທີ່ທາງແຂວງໄດ້ຈັດຕັ້ງປະຕິບັດມານັ້ນ ແມ່ນເຫັນວ່າມີຫຼາຍດ້ານທີ່ພົ້ນເດັ່ນ ເປັນຕົ້ນ ການປະສານງານ, ການນຳສົ່ງນິຕິກຳ ແມ່ນເຮັດເປັນປົກກະຕິ ແລະ ເຮັດໄດ້ດີ ເຫັນໄດ້ວ່ານິຕິກຳຂອງແຂວງແມ່ນມີຈຳນວນຫຼາຍ, ສະນັ້ນ, ທາງຄະນະນຳຂອງກະຊວງຍຸຕິທຳກໍໄດ້ມອບໃບຍ້ອງຍໍຂອງທ່ານລັດຖະມົນຕີກະຊວງຍຸຕິທຳ, ຄອມພິວເຕີ 1 ໜ່ວຍ ແລະ ເຄື່ອງພິມເອກະສານ 1 ໜ່ວຍ ໃຫ້ຄະນະຜູ້ປະສານງານຈົດໝາຍເຫດທາງລັດຖະການ ເພື່ອສົມລະເສີນຜົນງານ.

ຫຼັງຈາກນັ້ນ ທາງຄະນະນຳກະຊວງຍຸຕິທຳ ພ້ອມດ້ວຍຄະນະ ກໍໄດ້ເປີດກອງປະຊຸມຮ່ວມກັບຄະນະຜູ້ປະສານງານຂອງແຂວງ ເພື່ອປຶກສາຫາລື, ແລກປ່ຽນບົດຮຽນ.

ທ່ານ ສີວິໄລ ສີແສນດີ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ ທັງເປັນຫົວໜ້າຜູ້ປະສານງານ ກໍໄດ້ລາຍງານການເຄື່ອນໄຫວວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ ທ່ານໄດ້ກ່າວວ່າວຽກງານຈົດໝາຍເຫດທາງລັດຖະການໄດ້ຮັບຜົນດີ ຍ້ອນໄດ້ຮັບການຊີ້ນຳນຳພາຈາກຄະນະນຳຂອງແຂວງ, ຄະນະຫ້ອງວ່າການ, ຄະນະພະແນກຍຸຕິທຳແຂວງເປັນປົກກະຕິ ໃນການເຄື່ອນໄຫວວຽກງານ, ພາຍຫຼັງທີ່ໄດ້ຜ່ານການຝຶກອົບຮົມແລ້ວ ຄະນະປະສານງານຂັ້ນແຂວງ ກໍໄດ້ມີການຕິດຕາມ, ເກັບກຳນິຕິກຳ ເພື່ອສົ່ງມາລົງຈົດໝາຍເຫດທາງລັດຖະການໃຫ້ທັນກັບກຳນົດເວລາ, ຫຼັງຈາກນັ້ນ, ທ່ານກໍຍັງໄດ້ລາຍງານເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກຍາກ ແລະ ທິດທາງແຜນການໃນຕໍ່ໜ້າ.

ທ່ານ ຮອງລັດຖະມົນຕີກະຊວງຍຸຕິທຳ ກໍໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ການປະຕິບັດວຽກງານດັ່ງກ່າວ ເຫັນໄດ້ວ່າແຂວງບໍ່ແກ້ວ ແມ່ນປະຕິບັດໄດ້ດີພໍສົມຄວນ ສົມຄວນເອົາແບບຢ່າງໃຫ້ແຂວງອື່ນ ຂໍໃຫ້ຮັກສາມູນເຊື້ອເອົາໄວ້ ແລະ ປະຕິບັດວຽກງານໃຫ້ດີກວ່າເກົ່າ.

## III. ດ້ານດີ, ດ້ານອ່ອນ

### ❖ ດ້ານດີ

- ຄະນະນຳຂອງແຂວງໄດ້ເອົາໃຈໃສ່ໃກ້ຊິດຕິດແທດ ໃນການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ ໂດຍມີຄະນະຫ້ອງວ່າການ ແລະ ຄະນະພະແນກຍຸຕິທຳ, ພ້ອມຄະນະປະສານງານມີການຕິດຕາມກວດກາ ສະຫຼຸບລາຍງານເປັນປົກກະຕິ.
- ການປະສານງານລະຫວ່າງຫ້ອງວ່າການແຂວງ, ຄະນະທີມງານຈົດໝາຍເຫດຂອງແຂວງ ໃນການອອກແຈ້ງການກ່ຽວກັບການສ້າງນິຕິກຳລຸ່ມກົດໝາຍທຸກຄັ້ງ ຕ້ອງໄດ້ໄປຜ່ານພະແນກຍຸຕິທຳແຂວງ ແລະ ຄະນະຮັບຜິດຊອບນິຕິກຳລຸ່ມກົດໝາຍຂັ້ນແຂວງ ໃຫ້ອຳນວຍຄວາມສະດວກໃນການກວດກາບັນດາເອກະສານໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບລະບຽບຫຼັກການສ້າງນິຕິກຳຕ່າງໆ;
- ຄະນະປະສານງານຂັ້ນສູນກາງ ກໍໄດ້ໃຫ້ຄວາມຮ່ວມມືຊ່ວຍເຫຼືອ ແລະ ແນະນຳຂັ້ນຕອນ, ວິທີການຕ່າງໆໃຫ້ຄະນະປະສານງານຂັ້ນແຂວງຢ່າງຕໍ່ເນື່ອງ ໃນການແລກປ່ຽນບົດຮຽນໃນການເກັບກຳນິຕິກຳ ເພື່ອສົ່ງລວມໃຫ້ຄະນະປະສານງານຂັ້ນສູນກາງ ກໍຄືພະແນກຈົດໝາຍເຫດທາງລັດຖະການກະຊວງຍຸຕິທຳ;
- ໄດ້ມີການຝຶກອົບຮົມສຳມະນາ ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ ຊຶ່ງຈັດໂດຍກະຊວງຍຸຕິທຳ ແລະ ກໍໄດ້ມີການປະສານງານກັນລະຫວ່າງ ຂັ້ນສູນກາງ ແລະ ທ້ອງຖິ່ນເປັນປົກກະຕິ

### ❖ ດ້ານອ່ອນ

- ຄະນະນຳຂອງບາງແຂວງຍັງບໍ່ທັນເອົາໃຈໃສ່ໃກ້ຊິດຕິດແທດກັບຜູ້ປະສານງານເທົ່າທີ່ຄວນ ແລະ ຍັງບໍ່ຮູ້ວ່າຈົດໝາຍເຫດທາງລັດຖະການແມ່ນຫຍັງ;
- ພະນັກງານຜູ້ທີ່ຖືກແຕ່ງຕັ້ງເປັນຜູ້ປະສານງານຍັງບໍ່ທັນໄດ້ເຮັດຢ່າງຕັ້ງໜ້າຕາມການມອບໝາຍ;

- ເນື່ອງຈາກວ່າວຽກງານຈົດໝາຍເຫດທາງລັດຖະການເປັນວຽກງານທີ່ໃໝ່ ສະນັ້ນ, ການໃຈ້ແຍກ ນິຕິກຳທີ່ມີຜົນບັງຄັບທົ່ວໄປ ແລະ ຜົນບັງຄັບສະເພາະ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ;
- ບັນດາແຂວງຍັງບໍ່ຮັບຮູ້ເຖິງພາລະບົດບາດຂອງເວັບໄຊຈົດໝາຍເຫດທາງລັດຖະການ;
- ກົດໝາຍ ວ່າດ້ວຍການສ້າງນິຕິກຳ ຍັງບໍ່ທັນມີການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ.
- ບາງແຂວງຍັງບໍ່ທັນມີຜູ້ຊີ້ນຳໂດຍກົງຈາກນະຄະນຳຂອງແຂວງ ເຮັດໃຫ້ຜູ້ປະສານງານມີຄວາມລັງເລໃນການສົ່ງນິຕິກຳມາໃຫ້ກະຊວງຍຸຕິທຳ;
- ຍັງມີຫຼາຍຂະແໜງການຂັ້ນແຂວງ ຍັງບໍ່ທັນເຂົ້າໃຈແຈ້ງ ຄວາມໝາຍຄວາມສຳຄັນຂອງວຽກງານຈົດໝາຍເຫດທາງລັດຖະການ, ເຖິງວ່າຈະມີການໂຄສະນາເຜີຍແຜ່ ແລະ ລົງເວັບໄຊແລ້ວກໍຕາມ;
- ບາງແຂວງຍັງບໍ່ທັນມີຄວາມເຂົ້າໃຈໃນການສົ່ງນິຕິກຳຂອງແຂວງມາພິມລົງໃນເວັບໄຊຈົດໝາຍເຫດທາງລັດຖະການ ເພື່ອເຮັດໃຫ້ນິຕິກຳເຫຼົ່ານັ້ນມີຜົນສັກສິດຕາມກົດໝາຍ;
- ຂອດການປະສານງານຂັ້ນແຂວງຍັງບໍ່ທັນກົມກຽວກັນດີເທົ່າທີ່ຄວນ;
- ບັນດາແຂວງສ່ວນຫຼາຍແມ່ນຍັງບໍ່ທັນມີຄວາມຕື່ນຕົວໃນການເກັບໂຮມບັນດານິຕິກຳຂອງແຂວງມາໃຫ້ໜ່ວຍງານຊຶ່ງທາງໜ່ວຍງານຈົດໝາຍເຫດທາງລັດຖະການໄດ້ມີການເປີດກອງປະຊຸມຮ່ວມແລ້ວກໍຕາມ;
- ບຸກຄະລາກອນ ແລະ ອຸປະກອນການເຮັດວຽກຢູ່ຫ້ອງວ່າການແຂວງ ຍັງບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຈຶ່ງເຮັດໃຫ້ວຽກງານມີຄວາມຫຍຸ້ງຍາກ ແລະ ມີລັກສະນະຊັກຊ້າ;
- ຂອດການປະສານສົມທົບລະຫວ່າງແຂວງກັບກະຊວງຍຸຕິທຳຍັງບໍ່ທັນເປັນປົກກະຕິ;
- ຜູ້ປະສານງານຂອງແຂວງຍັງບໍ່ມີຄວາມເປັນເອກະພາບກັນເທື່ອ;
- ຜູ້ຊີ້ນຳຂອງແຂວງຕໍ່ວຽກງານຍັງບໍ່ທັນເຂົ້າໃຈລະອຽດ ແລະ ກໍຍັງບໍ່ທັນໄດ້ແຕ່ງຕັ້ງຜູ້ຊີ້ນຳໂດຍກົງ.

## IV. <u>ທິດທາງໃນຕໍ່ໜ້າ</u>

❖ **ທ່ານ ຮອງລັດຖະມົນຕີກະຊວງຍຸຕິທຳ ໄດ້ມີຄຳເຫັນຕື່ມໃນການລົງມາພົບປະ, ແລກປ່ຽນບົດຮຽນ ແລະ ປຶກສາຫາລື ກັບ ຄະນະນຳ ແລະ ຜູ້ປະສານງານ ຂອງ 3 ແຂວງພາກເໜືອ ແລະ ທິດທາງໃນຕໍ່ໜ້າ ດັ່ງນີ້:**

- ສືບຕໍ່ເພີ່ມທະວີເອົາໃຈໃສ່ປະສານສົມທົບລະຫວ່າງຜູ້ປະສານງານຂອງແຂວງ ກັບຜູ້ຮັບຜິດຊອບຂອງກະຊວງກະຊວງຍຸຕິທຳຕື່ມ;
- ສືບຕໍ່ໂຄສະນາເຜີຍແຜ່ໃຫ້ແກ່ສັງຄົມ ແລະ ພະນັກງານທີ່ກ່ຽວຂ້ອງ ຮັບຮູ້ເຖິງວຽກງານຈົດໝາຍເຫດທາງລັດຖະການຕື່ມອີກ;
- ຄະນະຮັບຜິດຊອບຂອງກະຊວງຍຸຕິທຳຄວນມີການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກັບຜູ້ປະສານງານຂອງແຂວງຢ່າງເປັນປົກກະຕິ;
- ຜູ້ປະສານງານຂອງແຂວງຄວນສືບຕໍ່ສັງລວມບັນດານິຕິກຳຂອງແຂວງ ແລ້ວສະເໜີໃຫ້ການນຳຂອງແຂວງມີຄຳເຫັນອະນຸມັດຕື່ມ ເພື່ອສົ່ງມາລົງຈົດໝາຍເຫດທາງລັດຖະການ;
- ໃຫ້ກະຊວງຍຸຕິທຳປະສານສົມທົບກັບກະຊວງພາຍໃນ ໃນການສ້າງຮ່າງນິຕິກຳ ເພື່ອຄວາມເປັນເອກະພາບ;
- ສືບຕໍ່ໃນການປະກອບອຸປະກອນເຕັກນິກອັນຈຳເປັນເຂົ້າໃນວຽກງານຈົດໝາຍເຫດທາງລັດຖະການ.

## V. <u>ພາກສະເໜີ</u>

- ສະເໜີໃຫ້ກະຊວງຈັດຝຶກອົບຮົມ ວິທີການຄົ້ນຄວ້າ ແລະ ຂັ້ນຕອນການຮ່າງນິຕິກຳລຸ່ມກົດໝາຍທີ່ມີລັກສະນະທົ່ວໄປ ໃຫ້ບັນດາຂະແໜງການຂັ້ນແຂວງໄດ້ຮຽນຮູ້ນຳຕື່ມ;

- ສະເໜີໃຫ້ກະຊວງຍຸຕິທຳ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຈິດໝາຍເຫດທາງລັດຖະການຢູ່ຂັ້ນແຂວງໃຫ້ຫຼາຍຂຶ້ນຕື່ມ;
- ສະເໜີການນຳແຂວງແຕ່ງຕັ້ງຄະນະປະສານງານຈິດໝາຍເຫດທາງລັດຖະການເພີ່ມຕື່ມ ເພື່ອໃຫ້ແທດເໝາະກັບໜ້າວຽກຕົວຈິງ;
- ສະເໜີໃຫ້ຄະນະປະສານງານຈິດໝາຍເຫດທາງລັດຖະການຂອງກະຊວງຍຸຕິທຳ ຊ່ວຍຈັດຝຶກອົບຮົມລະຫວ່າງບັນດາແຂວງເພື່ອຖອດຖອນບົດຮຽນຮ່ວມກັນ ແລະ ຈັດຝຶກອົບຮົມໃຫ້ບັນດາພະແນກການອ້ອມຂ້າງແຂວງ;
- ສະເໜີໃຫ້ທາງກະຊວງຍຸຕິທຳ ນຳເອົາກົດໝາຍວ່າດ້ວຍ ການສ້າງນິຕິກຳ ແລະ ວຽກງານຈິດໝາຍເຫດທາງລັດຖະການ ເຂົ້າໃນປຶ້ມຕຳລາການຮຽນ-ການສອນ ກົດໝາຍຊັ້ນຕົ້ນ 03 ເດືອນ ແລະ ກົດໝາຍ 45 ວັນ ໃຫ້ການນຳຫຼັກແຫຼ່ງຂັ້ນແຂວງ ແລະ ເມືອງຢູ່ຂັ້ນຮາກຖານ.
- ຢາກໃຫ້ທາງກະຊວງຍຸຕິທຳອອກນິຕິກຳໃດໜຶ່ງ ໃນການໃຈ້ແຍກນິຕິກຳທີ່ມີຜົນບັງຄັບທົ່ວໄປ ແລະ ຜົນບັງຄັບສະເພາະ;
- ຢາກໃຫ້ມີການຝຶກອົບຮົມກັບບັນດາແຂວງໃນຂອບເຂດທົ່ວປະເທດຕື່ມ;
- ຢາກໃຫ້ພະແນກຍຸຕິທຳແຂວງເປັນຜູ່ຈັດຕັ້ງປະຕິບັດເປັນຕົ້ນເຄືອຂ່າຍປະສານງານ ແລະ ບຸກຄະລາກອນ.

**ຫົວໜ້າກົມ**

ກະຊວງຍຸຕິທຳ
ກົມໂຄສະນາເຜີຍແຜ່ກົດໝາຍ

**ພູທອນ ແກ້ວດວງມະນີ**